**ແຜນການສອນ**
**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດ ທີ 02 ພືສຈິກາ 2008** (11-02-2008)

---

## <u>ພຣະເຢຊູເທົ່ານັ້ນເປັນຜູ້ໂຜດໃຫ້ພົ້ນ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ໂຣມ 9:33-10:15)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ທ່ານໂປໂລຮູ້ວ່າຄົນທັງຫລາຍມີໃຈຮ້ອນຮົນໃນເຣື່ອງສາສນາຂອງເຂົາ. ແຕ່ຄວາມຮ້ອນຮົນດັ່ງກ່າວນັ້ນຍັງບໍ່ພຽງພໍເທື່ອ. ເຂົາເຈົ້າຈຳເປັນຕ້ອງເຊື່ອໃນອົງພຣະເຢຊູ ເພື່ອຈະໄດ້ຮັບຄວາມລອດພົ້ນ. ແຕ່ກ່ອນທີ່ຄົນທັງຫລາຍຈະໄດ້ເຊື່ອໃນອົງພຣະເຢຊູ ບັນດາຜູ້ທີ່ເຊື່ອຕ້ອງອອກໄປບອກເຂົາເຈົ້າໃນເຣື່ອງຂ່າວປະເສີດນີ້.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>** ຄວາມລອດພົ້ນໄດ້ມາທາງຄວາມເຊື່ອໃນອົງພຣະເຢຊູຄຣິດເທົ່ານັ້ນ ບາງຄົນຄິດວ່າຖ້າໃຫ້ເຂົາເຈົ້າມີຄວາມຮ້ອນຮົນໃນສາສນາພຽງພໍ ເຂົາເຈົ້າຈະເຮັດໃຫ້ພຣະເຈົ້າພໍພຣະທັຍ ແລະພຣະອົງຈະຊົງຍອມຮັບ ແຕ່ວ່າຄວາມຮ້ອນຮົນໃນສາສນາພຽງຢ່າງດຽວບໍ່ສາມາດຊ່ອຍເຂົາເຈົ້າໃຫ້ລອດພົ້ນໄດ້. ໃນກໍຣະນີດຽວກັນຄຣິສຕຽນຫລາຍຄົນກໍມີຄວາມເພິ່ງພໍໃຈເຊັ່ນນັ້ນສ່ວນຫລາຍບັນດາຜູ້ທີ່ເຊື່ອຈະບໍ່ມີຄວາມຮີບເຮັ່ງໃນການປະກາດຂ່າວປະເສີດເຣື່ອງພຣະເຢຊູ.

**<u>ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ?</u>**
ບົດຮຽນນີ້ຈະຊ່ອຍທ່ານໃຫ້ຮູ້ເຖິງຄວາມຮີບເຮັ່ງເພື່ອໄປບອກຄົນທັງຫລາຍວ່າ ຄວາມລອດພົ້ນມີຢູ່ໃນອົງພຣະເຢຊູຄຣິດເທົ່ານັ້ນແລະເພື່ອຊ່ອຍສົ່ງຄົນອອກໄປແບ່ງປັນຂ່າວປະເສີດກັບຄົນທັງຫລາຍທີ່ບໍ່ເຄີຍໄດ້ຍິນເຣື່ອງພຣະເຢຊູ.

## <u>ການຈັດຕຽມຂອງຄຣູ:</u>

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີ ແລະບົດຮຽນ.
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ.
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ.
4. ອ່ານ **<u>"ແຜນການສອນ",</u>** ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບ ຫລືຕົວຢ່າງກໍຈົດບັນທຶກໄວ້.

## <u>ແຜນການສອນ:</u>

**1.** ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
**2.** ສຳຫລວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດ ເພື່ອຈະໄດ້ສົ່ງຂ່າວຫາ ແລະອະທິຖານເພື່ອ.
**3.** ຖາມນັກຮຽນວ່າ ເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນອາທິດທີ່ຜ່ານມາ ເພື່ອທົບທວນຄວາມຊົງຈຳ.
**4.** ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ. ຄຳພຍານ.
**5.** ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນ ແລະຜູ້ຂາດຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

**ແນະນຳ**: ກ່ອນຈະນັ່ງຮຽນ ໃຫ້ນັກຮຽນຄົນນຶ່ງອາສາສມັກເປັນຜູ້ແບ່ງກຸ່ມ. ຫລັງຈາກຈັດຕັ້ງກັນແລ້ວໃຫ້ຢາຍກຸກກີ້ ໃຫ້ທຸກຄົນ ແຕ່ຜູ້ແຈກບໍ່ຕ້ອງເອົາ. ພວກເຮົາໄດ້ສນັບສນູນໃຫ້ເດັກນ້ອຍເພື່ອນບ້ານຂອງພວກເຮົາໃຫ້ຮູ້ຈັກໃຫ້ຄົນອື່ນ ຫລິ້ນຂອງຫລິ້ນນຳ. ແມ່ນຫຍັງຈະເກີດຂຶ້ນຖ້າພວກເຮົາບໍ່ຍອມແບ່ງປັນແກ່ຄົນອື່ນ? ໃຫ້ຜູ້ນຶ່ງອະທິບາຍວ່າ: ລາວມີ ຄວາມຮູ້ສຶກຢ່າງໃດໃນເມື່ອລາວບໍ່ໄດ້ຮັບກຸກກີ້ຈາກຜູ້ແບ່ງປັນກຸກກີ້ໃນມື້ນີ້.

- ແມ່ນຫຍັງຈະເກີດຂຶ້ນຖ້າເຮົາເມີນເສີຍຕໍ່ການແບ່ງປັຍກຸກກີ້ໃຫ້ເພື່ອນຂອງເຮົາ?
- ຖ້າພວກເຮົາຫາກບໍ່ເອົາຢາໃຫ້ຜູ້ທີ່ເຈັບໄຂ້ກິນແລ້ວຜູ້ນັ້ນຈະເປັນຢ່າງໃດ? ມີຫລາຍຄັ້ງທີ່ຄຣິສຕຽນບໍ່ໄດ້ບອກ ຄົນອື່ນວ່າ ພຣະເຢຊູເປັນຜູ້ຊ່ອຍຊີວິດໃຫ້ລອດພົ້ນ ແກ່ຜູ້ທີ່ຕ້ອງການພຣະເຢຊູເລີຍ.

1. **ກ້ອນຫີນທີ່ໃຫ້ຕຳສະດຸດ**: (ໂຣມ 9:33)

- ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ໂຣມ 9:33
- ແຈກຢາຍດິນໜຽວໃຫ້ນັກຮຽນເຮັດເປັນຮູບລັກສະນະທີ່ສະແດງເຖິງຄວາມໄວ້ວາງໃຈຂອງເຂົາເຈົ້າ. ແລ້ວໃຫ້ຜູ້ນຶ່ງອາສາສມັກສະແດງວັດຖຸທີ່ລາວເຮັດຂຶ້ນມານັ້ນ. ຖາມ: ວັດຖຸທຸກອັນຄືກັນໝົດບໍ່?
- ມີຄຣິສຕຽນຫລາຍຄົນໄດ້ພໍໃຈໃນຄວາມກຽດຄ້ານ. ຖາມ: ເປັນຫຍັງເຂົາຈຶ່ງມີຄວາມຮູ້ສຶກໃນທາງນັ້ນ? ອ່ານຫົວຂໍ້ບົດຮຽນ ແລ້ວບອກນັກຮຽນວ່າ: ຖ້າເອົາໄມ້ວັດແທກມາວັດແທກເບິ່ງຄວາມເຊື່ອຂອງພວກເຮົາ ໃຫ້ຖືກຕາມຫົວຂໍ້ບົດຮຽນແລ້ວ, ຈະມີຄຣິສຕຽນຫລາຍຄົນທີ່ບໍ່ເອົາຕາມຫົວຂໍ້ເຣື່ອງບົດຮຽນນີ້.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ**: (ໂຣມ 9:33)

1. ທ່ານໄດ້ພິຈາຣະນາແລ້ວວ່າ ແມ່ນຫຍັງແດ່ທີ່ທ່ານໄດ້ມີໂອກາດດີທີ່ສຸດໃນຊີວິດຂອງທ່ານ?
2. ໂອກາດເຫລົ່ານັ້ນຖ້າຈະເອົາມາປຽບທຽບໃສ່ກັບໂອກາດທີ່ໄດ້ນຳຄົນມາຫາພຣະເຢຊູແລ້ວເປັນ ແນວໃດ?
3. ເປັນຫຍັງທ່ານໂປໂລຈຶ່ງເວົ້າວ່າ ພຣະເຢຊູຄື "ກ້ອນຫີນຕຳສະດຸດ"?
4. ພຣະເຢຊູໄດ້ຊົງວາງ ກ້ອນບຫີນສະດຸດໃຫ້ແກ່ຄົນທຸກມື້ນີ້ຢ່າງໃດ?

2. **ກ່ຽວກັບຄວາມຮ້ອນຮົນ**: (ໂຣມ 10:1-3)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຣມ 10:1-3
- ອະທິບາຍຄວາມແຕກຕ່າງລະຫວ່າງການເປັນຜູ້ທີ່ຕັ້ງແກ້ງບໍ່ເຫັນ ກັບ ການເປັນຜູ້ທີ່ແຈກຢາຍຄຸກກີ້, ແລ້ວມີ ຜູ້ປະຕິເສດບໍ່ຍອມຮັບເອົາ. ແມ່ນໃຜຈະເປັນຜູ້ຮັບຜິດຊອບໃນເມື່ອທ່ານມີໂອກາດເອົາໃຫ້ແລ້ວ ແຕ່ເຂົາບໍ່ ຍອມຮັບເອົາ?
- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມໂຣມ 10:1-3. ແລ້ວເອົາຄຳທີ່ທ່ານໂປໂລຂຽນມາປຽບທຽບໃສ່ກັບ
- ສິ່ງທີ່ທ່ານໂພຟລໄດ້ເວົ້າກ່ຽວກັບເຣື່ອງຄຸກກີ້. ເຊັ່ນດຽວກັນຄົນຢິວບາງຄົນກໍໄດ້ຮັບເອົາຄວາມເຊື່ອທີ່ອີງພຣະ ເຢຊູສເນີໃຫ້.
- ການຕັດສິນໃຈກໍຂຶ້ນຢູ່ກັບຜູ້ຮັບ ແລະຄວາມພໍໃຈວ່າຄົນນັ້ນຈະມີຄວາມຕອບສນອງຕໍ່ຂ່າວປະເສີດແນວໃດ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ**: ໂຣມ 10:1-3

1. ເປັນຫຍັງຄຣິສຕຽນຈຶ່ງຄວນສົນໃຈຕໍ່ຜູ້ທີ່ຫລົງຫາຍ?

2. ພວກເຮົາສາມາດວັດແທກຄວາມເຊື່ອຂອງຄົນໃດຄົນນຶ່ງ ດ້ວຍຄວາມສົນໃຈຂອງຄົນນັ້ນທີ່ສະແດງອອກມາໃຫ້ເຫັນນັ້ນໄດ້ບໍ່?
3. ທ່ານຈະຕັດສິນໃຈຮັບເອົາຫລັກຖານໃນຄວາມເຊື່ອໄດ້ແນວໃດ?

## 3. <u>ພຣະເມຊີອາແຫ່ງຄວາມເຊື່ອ:</u> (ໂຣມ 10:4-13)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຣມ 10:4-13
- ທ່ານຮູ້ຈັກໃຜແດ່ບໍ່ທີ່ຕ້ອງການທີ່ຈະຮູ້ຈັກເຣື່ອງຂອງຄວາມເຊື່ອໄວ້ວາງໃຈ?
- ໃນຄອບຄົວ, ໝູ່ເພື່ອນ ແລະຍາດຕິພີ່ນ້ອງຂອງທີ່ມີໃຜແດ່ທີ່ທ່ານຮູ້ວ່າເຂົາເຈົ້າຢາກມີຄວາມເຊື່ອໃນພຣະເຢຊູຄຣິດ?
- ທ່ານໄດ້ເຫັນທ່ານໂປໂລເນັ້ນຈຸດສຳຄັນໂດຍຄວາມເຊື່ອໃນພຣະທັມ ໂຣມ 10:9-10 ວ່າເປັນແນວໃດ?

### <u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ໂຣມ 10:4-13

1. ທ່ານຄິດວ່າໃນພຣະຄັມພີແຫ່ງຄວາມຈິງບອກວ່າ ພຣະເຢຊູເທົ່ານັ້ນເປັນພຣະຜູ້ໂຜດໃຫ້ພົ້ນ ແລະຜູ້ທີ່ຈະເຂົ້າໄປໃນສວັນຕ້ອງໄປທາງພຣະເຢຊູເທົ່ານັ້ນແມ່ນບໍ່?
2. ພຣະເຢຊູເທົ່າທຽມກັບພຣະເຈົ້າຢ່າງໃດ? ມີຄວາມສຳຄັນແນວໃດ?

## 4. <u>ຄວາມສຳຄັນໃນການປະກາດຂ່າວປະເສີດ:</u> (ໂຣມ 10:14-15)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານນພຣະທັມ ໂຣມ 10:14-15
- ແມ່ນຫຍັງທີ່ເຮັດໃຫ້ການປະກາດຂ່າວປະເສີດຕຳສະດຸດ?
- ຄວາມເຊື່ອ ໄວ້ວາງໃຈ ແລະການຕົກລົງປົງໃຈທຳງານໃນຊີວິດຄຣິສຕຽນແນວໃດ?

### <u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ໂຣມ 10:14-15

1. ຜູ້ທີ່ມີຄວາມຮັກຕໍ່ພຣະເຢຊູຢ່າງຈິງໃຈຈະບໍ່ບອກເຣື່ອງພຣະອົງໃຫ້ແກ່ຄອບຄົວ ແລະໝູ່ເພື່ອນກໍໄດ້ບໍ່?
2. ທ່ານຄິດວ່າເປັນດ້ວຍເຫດໃດ ພຣະເຈົ້າຈຶ່ງໃຫ້ພວກເຮົາເປັນຜູ້ປະກາດເຜີຍແຜ່ຂ່າວປະເສີດ?
3. ພວກເຮົາຈະເຮັດແນວໃດເພື່ອໃຫ້ມີເວລາໃນການເປັນພຍານຫລາຍຂຶ້ນໄດ້?

### <u>ບົດຮຽນແຫ່ງຄວາມຈິງໃນພຣະຄັມພີ:</u>

- ມີສອງທາງທີ່ພວກເຮົາສາມາດຕອບສນອງພຣະຄຣິດໄດ້ຄື: ກ້ອນຫີນທີ່ເຮັດໃຫ້ຕຳສະດຸດ - ເຊື່ອໄວ້ວາງໃຈໃນພຣະອົງ ຫລື ຕຳສະດຸດໃນພຣະອົງ.
- ບັນດາຜູ້ທີ່ເຊື່ອໄດ້ຍອມສາລະພາບໃນການວາຍພຣະຊົນ ແລະການຟື້ນພຣະຊົນຂອງພຣເຢຊູນັ້ນເປັນສິ່ງສຳຄັນ ແລະເຊື່ອວ່າພຣະອົງຊົງເປັນພຣະຜູ້ໂຜດໃຫ້ພົ້ນ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ** www.lsbf.org. by JH